**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ ເລກທີ /ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 2023

# ບົດປະເມີນຜົນກະທົບ

# ກົດໝາຍ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາ ໃນການສ້າງ ຮ່າງ ກົດໝາຍ

### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ/ອົງການ: ກະຊວງອຸດສາຫະກຳ ແລະ ການຄ້າ;

ຊື່ກົມ/ພະແນກ: ກົມການຄ້າພາຍໃນ;

ຊື່ ແລະ ຕຳແໜ່ງ ຂອງພະນັກງານທີ່ຮັບຜິດຊອບ :

- ທ່ານ ບຸນຈັນ ລໍວັນໄຊ ຮອງຫົວໜ້າກົມການຄ້າພາຍໃນ; ເບີໂທລະສັບ: 020 22037778.
- ທ່ານ ພົງສະຫວັນ ວົງວິໄລ ຮອງຫົວໜ້າພະແນກ ເບີໂທລະສັບ: 020 96169966.
- ທ່ານ ພູຊຳ ບຸນພັນ, ວິຊາການ ເບີໂທລະສັບ: 020 22225374 / ໂທແລະແຟັກ 021412436
  ອີເມລ: phousampsbp1@gmail.com

### 1.2 ຊື່ນິຕິກຳ

ຊື່ຮ່າງນິຕິກຳ: **ກົດໝາຍ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ**

ຮ່າງນິຕິກຳແມ່ນສະບັບ: ☑ ໃໝ່ ☐ ປັບປຸງ

### 1.3 ກຳນົດເວລາ

1. ແຕ່ງຕັ້ງຄະນະຮັບຜິດຊອບ ຊີ້ນຳລວມ, ຄະນະຮັບຜິດຊອບສ້າງກົດໝາຍ ແລະ ກອງເລຂາ ປີ 2022.

2. ສ້າງແຜນການເຄື່ອນໄຫວການຄົ້ນຄວ້າສ້າງຮ່າງກົດໝາຍ ປີ 2022.

3. ຈັດກອງປະຊຸມຄັ້ງທຳອິດຂອງຄະນະຮັບຜິດຊອບສ້າງຮ່າງກົດໝາຍ ເພື່ອຜ່ານຮ່າງແຜນການເຄື່ອນໄຫວການຄົ້ນຄວ້າສ້າງຮ່າງກົດໝາຍ ພ້ອມທັງຝຶກອົບຮົມກ່ຽວກັບການຂຽນບົດປະເມີນຜົນກະທົບ ປີ 2022.

4. ເກັບກຳຂໍ້ມູນ, ເຮັດການວິເຄາະ-ວິໄຈ, ສັງລວມນິຕິກຳຕ່າງໆທີ່ຕິດພັນກັບວຽກງານລາຄາ ທັງຢູ່ພາຍໃນ ແລະ ຕ່າງປະເທດ ແລະ ສັງລວມເນື້ອໃນຄຳເຫັນ ຈາກແຕ່ລະພາກສ່ວນ ແລະ ຈັດກອງປະຊຸມ ເພື່ອຄົ້ນຄວ້າກ່ຽວກັບຄຳເຫັນດັ່ງກ່າວ ປີ 2022.

5. ຄົ້ນຄວ້າໂຄງປະກອບ, ເນື້ອໃນ ຂອງຮ່າງກົດໝາຍ ແລະ ຮ່າງເນື້ອໃນບົດປະເມີນຜົນກະທົບ ແລະ ຈັດກອງປະຊຸມຄະນະວິຊາການ ເພື່ອດຳເນີນການຄົ້ນຄວ້າ ແລະ ຜ່ານຮ່າງກົດໝາຍ ປີ 2022.

6. ສົ່ງຮ່າງໂຄງປະກອບກົດໝາຍ ແລະ ຮ່າງເນື້ອໃນບົດປະເມີນຜົນກະທົບ ໃຫ້ສູນປະເມີນຜົນກະທົບຮ່າງນິຕິກຳ ກົມກົດໝາຍ ກະຊວງຍຸຕິທຳ ໃນທ້າຍປີ ປີ 2022.

7. ເຜີຍແຜ່ລົງເວັບໄຊຈົດໝາຍເຫດທາງລັດຖະການ ເປັນເວລາ 60 ວັນ ແລະ ເວັບໄຊ ຂອງກະຊວງ ອຄ 2023.

8. ຈັດກອງປະຊຸມທາບທາມຄຳເຫັນ ຢູ່ ພາກກາງ, ພາກເໜືອ ແລະ ພາກໃຕ້ ປີ 2023.

9. ສັງລວມຄຳຄິດເຫັນຈາກການທາບທາມ ແລະ ຈັດກອງປະຊຸມເພື່ອຄົ້ນຄວ້າ ແລະ ປັບປຸງຄືນ ຕາມການປະກອບຄຳເຫັນ ປີ 2023.

10. ສົ່ງຮ່າງກົດໝາຍ ແລະ ຮ່າງເນື້ອໃນບົດປະເມີນຜົນກະທົບໃຫ້ສູນປະເມີນຜົນກະທົບຮ່າງກົດໝາຍ ກົມກົດໝາຍ ກະຊວງຍຸຕິທຳ ກວດກາ ແລະ ໃຫ້ຄຳເຫັນ ປີ 2023.

11. ຈັດກອງປະຊຸມທາງວິຊາການ ຂອງຄະນະຮັບຜິດຊອບສ້າງຮ່າງກົດໝາຍ ຮ່ວມກັບ ກົມກົດໝາຍ ກະຊວງຍຸຕິທຳ ປີ 2024.

12. ຍື່ນສະເໜີຮ່າງກົດໝາຍໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ພິຈາລະນາ ແລະ ຜ່ານຮ່າງກົດໝາຍໃນກອງປະຊຸມລັດຖະບານ ປີ 2023.

13. ຈັດກອງປະຊຸມປັບປຸງຮ່າງກົດໝາຍຄືນ ຕາມການປະກອບຄຳເຫັນ ຂອງສະມາຊິກລັດຖະບານ ປີ 2023.

14. ນຳສະເໜີ ຮ່າງກົດໝາຍ ຕໍ່ຄະນະປະຈຳສະພາແຫ່ງຊາດ ປີ 2023.

15. ຈັດກອງປະຊຸມປັບປຸງຮ່າງກົດໝາຍ ຮ່ວມກັບ ຄະນະກຳມາທິການກົດໝາຍ ຂອງສະພາແຫ່ງຊາດ ເພື່ອຂໍຄຳເຫັນ ແລະ ກະກຽມຄວາມພ້ອມຂອງຮ່າງກົດໝາຍ ກ່ອນນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ປີ 2023.

16. ນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງ ປີ 2023.

17. ກອງປະຊຸມຮຽບຮຽງ ຮ່າງ ກົດໝາຍກັບຄະນະປະຈຳສະພາແຫ່ງຊາດ ເພື່ອສະເໜີປະທານປະເທດປະກາດໃຊ້ ໃນທ້າຍປີ 2023.

## 2. ບັນຫາ ແລະ ຈຸດປະສົງ

### 2.1ບັນຫາ

ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເປັນວຽກງານທີ່ມີຄວາມສຳຄັນ ແລະ ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ໂດຍສະເພາະໃນລາຍການສິນຄ້າຄວບຄຸມລາຄາ (ບັນຊີ ກ) ແລະ ຕິດພັນກັບຫຼາຍຂະແໜງການ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ການຄຸ້ມຄອງ ແລະ ການເຄື່ອນໄຫວຈັດຕັ້ງປະຕິບັດຕົວຈິງ ແມ່ນ ຍັງພົບກັບບັນຫາຫຍຸ້ງຍາກຫຼາຍປະການ ເຖິງແມ່ນວ່າ ຂະແໜງອຸດສາຫະກຳ ແລະ ການຄ້າ ໄດ້ຕັ້ງໜ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ແລ້ວກໍຕາມ ແຕ່ກໍບໍ່ສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ອັນເນື່ອງມາຈາກ ບໍ່ມີນິຕິກຳທີ່ເປັນກົດໝາຍທີ່ເປັນອັນລວມສູນ ລວມທັງການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ແກ່ຂະແໜງການຕ່າງໆ ໃນການຄຸມຄອງ ແລະ ປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຊຶ່ງມັນໄດ້ສ່ອງແສງເຖິງບາງບັນຫາທີ່ສຳຄັນ ດັ່ງນີ້:

- ການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແມ່ນ ຍັງບໍ່ທັນເປັນເອກະພາບກັບແຕ່ລະຂະແໜງການ, ບໍ່ທັນເປັນເຈົ້າການຮ່ວມກັນໄດ້ເທື່ອ, ຍັງຈັດຕັ້ງປະຕິບັດໃນຮູບແບບຕ່າງຄົນຕ່າງເຮັດ, ບາງຂະແໜງເຮັດ ແຕ່ບາງຂະແໜງຍັງບໍ່ມີໜ່ວຍງານຮັບຜິດຊອບວຽກງານນີ້ເປັນອັນສະເພາະ ຫຼື ມີ ກໍບໍ່ທັນເປັນຮູບເປັນຮ່າງ ແລະ ຂາດຄວາມເປັນເອກະພາບລະຫວ່າງຂະແໜງການກ່ຽວຂ້ອງ ຕົວຢ່າງ: ໃນໂຄງປະກອບຕົ້ນທຶນຊີ້ນໝູ ແມ່ນ ຈະມີບົດບາດຂອງ 5 ຂະແໜງການຫຼັກໃນການຄຸ້ມຄອງ ເຊັ່ນ: ຂະແໜງກະສິກຳ-ປ່າໄມ້ (ຫົວອາຫານ), ຂະແໜງການເງິນ (ອາກອນ), ຂະແໜງພະລັງງານ-ບໍ່ແຮ່ (ໄຟຟ້າ), ທະນາຄານ ແຫ່ງ ສປປ ລາວ (ອັດຕາດອກເບ້ຍ) ແລະ ຂະແໜງອຸດສາຫະກຳ-ການຄ້າ (ສະຖານທີ່ຈຳໜ່າຍ ຫຼື ເວລາເປັນສິນຄ້າແລ້ວ).
- ກົນໄກການປະສານງານ ລະຫວ່າງ ໜ່ວຍງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຢູ່ຂັ້ນທ້ອງຖິ່ນກໍຍັງບໍ່ທັນເຂັ້ມແຂງ ແລະ ຍັງເຂົ້າໃຈວ່າ ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແມ່ນຂຶ້ນກັບພະແນກ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ ຂອງແຂວງ ຫຼື ເມືອງ ເປັນຫຼັກ.

- ໄລຍະຜ່ານມາ, ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແມ່ນ ນຳໃຊ້ມາດຕະການຕ່າງໆ ຕາມດຳລັດ 474/ນຍ ຄື: ມາດຕະການຄວບຄຸມລາຄາ (ປະກອບມີ 05 ມາດຕະການຍ່ອຍ ຄື: ການກຳນົດໂຄງປະກອບລາຄາ; ການກຳນົດລາຄາສູງສຸດ; ລາຄາຕ່ຳສຸດ ຫຼື ຂອບເຂດລາຄາ; ຄວບຄຸມສິນຄ້າໃນຄັງແຮສຳຮອງ; ການຖົມຂຸມສິນຄ້າ ແລະ ການບໍລິການ ແລະ ການດັດສົມການສະໜອງ ແລະ ຄວາມຕ້ອງການ) ແລະ ມາດຕະການຕິດຕາມການ ເໜັງຕີງຂອງລາຄາ ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ຫຼາຍມາດຕະການ ແມ່ນ ຍັງບໍ່ສາມາດຜັນຂະຫຍາຍ ແລະ ນຳໃຊ້ໄດ້ຢ່າງທົ່ວເຖິງ ຕໍ່ກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ.
- ປະຕິບັດຕາມແຈ້ງການ ຂອງຫ້ອງວ່າການລັດຖະບານ ສະບັບເລກທີ 898/ຫສນຍ.ກລຂ, ລົງວັນທີ 22 ມິຖຸນາ 2017 ກ່ຽວກັບ ການຜັນຂະຫຍາຍມະຕິສະພາແຫ່ງຊາດ ສະບັບເລກທີ 017/ສພຊ, ລົງວັນທີ 02 ມິຖຸນາ 2017 ໃນມາດຕາ2 ຂໍ້ 1 ໄດ້ກຳນົດວ່າ “ໃຫ້ຄົ້ນຄວ້າຍົກລະດັບດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010 ຂຶ້ນເປັນກົດໝາຍ.

**2.2 ຈຸດປະສົງ**

- ການຄົ້ນຄວ້າສ້າງ ກົດໝາຍ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແມ່ນ ອີງຕາມສະພາບຄວາມຈຳເປັນ, ເຄັ່ງຮ້ອນ ແລະ ຮີບດ່ວນ ໃຫ້ມີການສ້າງກົດໝາຍ ເພື່ອເປັນເຄື່ອງມືໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເຮັດໃຫ້ລາຄາສິນຄ້າ ແລະ ຄ່າບໍລິການ ຢູ່ ສປປ ລາວ ມີສະຖຽນລະພາບ ຖືກກຳນົດດ້ວຍກົນໄກຕະຫຼາດ ທີ່ມີການຄຸ້ມຄອງດັດສົມຂອງລັດ.

- ຍົກລະດັບດຳລັດ 474/ນຍ ຂຶ້ນເປັນກົດໝາຍ ຕາມແຜນສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດຊຸດທີ IX, ໃນໄລຍະປີ 2020-2025 ສະບັບເລກທີ 03/ສພຊ, ລົງວັນທີ 26/03/2021 ໃຫ້ສຳເລັດຕາມແຜນ.

- ຍົກລະດັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ດ້ວຍການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະຂະແໜງການຢ່າງຈະແຈ້ງ, ມີຄວາມເປັນເອກະພາບ ກ່ຽວກັບ ກົນໄກ ແລະ ວິທີການຄຸ້ມຄອງລາຄາ, ການປະສານງານ ລະຫວ່າງ ຂະແໜງການ ແຕ່ສູນກາງລົງຮອດທ້ອງຖິ່ນ.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

### 3.1 ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ

ຖ້າຫາກ ສປປ ລາວ ເຮົາ ຫາກຍັງສືບຕໍ່ນຳໃຊ້ດຳລັດ 474/ນຍ ແລະ ບັນດານິຕິກຳລຸ່ມກົດໝາຍທີ່ກ່ຽວ ຂ້ອງກັບການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໂດຍບໍ່ຍົກລະດັບດຳລັດ 474/ນຍ ເປັນກົດໝາຍ ແມ່ນຍັງບໍ່ມີຄວາມພຽງພໍໃນການຈັດຕັ້ງປະຕິບັດຄຸ້ມຄອງລາຄາສິນຄ້າ, ເພາະເຫັນວ່າ ການນຳໃຊ້ກົດໝາຍທີ່ເໜືອດຳລັດ ມັນສາມສ້າງເປັນເຄື່ອງມືທີ່ຫັດກຸ່ມ ກວ່າການນຳໃຊ້ນິຕິກຳຈະເຮັດທຸກພາກສ່ວນຮ່ວມກັນຈັດຕັ້ງປະຕິບັດໄດດີ ຕາມພາລະບົດບາດຂອງໃຜມັນ ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ກໍຈະໄດ້ຮັບຜົນດີ, ແຕ່ກົງກັນຂ້າມ ຍັງໃຊ້ດຳລັດຄືເກົ່າ ແມ່ນຍັງມີລັກສະນະຖິ້ມຄວາມຮັບຜິດຊອບໃຫ້ແຕ່ຂະແໜງການອຸດສາຫະກຳ ແລະ ການຄ້າຝ່າຍດຽວ ບໍ່ສາມາດຄຸ້ມຄອງໄດ້ທຸກພາກສ່ວນ ແລະ ກໍບໍ່ສາມາດຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໃຫ້ຢູ່ໃນຄວາມສະຫງົບໄດ້.

**ຜົນດີ.**

- ຖືກກຳນົດດ້ວຍກົນໄກຕະຫຼາດ ໂດຍມີການຄຸ້ມຄອງດັດສົມຂອງລັດ ຊຶ່ງຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ-ລັດ;
- ໄດ້ມີຄະນະຊີ້ນຳການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຊຶ່ງເປັນອີງການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຕາມດຳລັດ 474/ນຍ, ຊ່ວຍໃນການປະສານງານ ແລະ ການຈັດຕັ້ງປະຕິບັດ ຂອງບັນດາຂະແໜງການ;

- ປະຊາຊົນ ກໍຄືຜູ້ຊົມໃຊ້ ໄດ້ຮັບຄວາມເປັນທຳທາງດ້ານລາຄາສິນຄ້າ ແລະ ຄ່າບໍລິການ ທີ່ສົມເຫດສົມຜົນ, ມີທາງເລືອກ, ໄດ້ຊົມໃຊ້ສິນຄ້າ ທີ່ດີມີຄຸນນະພາບ ແລະ ການບໍລິການ ທີ່ເໝາະສົມບໍ່ເອົາປຽບຜູ້ບໍລິໂພກ;
- ເຮັດໃຫ້ການແຂ່ງຂັນມີຄວາມເປັນທຳຂຶ້ນ;
- ສາມາດຮັກສາໄດ້ສະຖຽນລະພາບທາງດ້ານລາຄາ ຢູ່ໃນລະດັບໃດໜຶ່ງ, ບໍ່ໃຫ້ມີ ຫຼື ຫຼຸດຜ່ອນການສວຍໂອກາດຂຶ້ນລາຄາສິນຄ້າ ແລະ ຄ່າບໍລິການ ໃນສະພາບປົກກະຕິ ແລະ ສະພາບວິກິດຕ່າງໆ;

**ຜົນເສຍ.**

- ດຳລັດ ແມ່ນ ນິຕິກຳລຸ່ມກົດໝາຍ, ໃນການຈັດຕັ້ງປະຕິບັດຕົວຈິງ ເກີດມີປະກົດການສົມທຽບ ລະຫວ່າງ ດຳລັດ ແລະ ກົດໝາຍ, ການປະຕິບັດໃນການຄຸ້ມຄອງລາຄາ ບາງຂະແໜງການ ຍັງບໍ່ທັນສາມາດກຳນົດທາງດ້ານລາຄາໄປລວງດຽວກັນ;
- ເກີດມີຊ່ອງຫວ່າງ ເຮັດໃຫ້ສູນເສຍລາຍຮັບເຂົ້າງົບປະມານລັດ;
- ຍັງນຳໃຊ້ດຳລັດ, ນິຕິກຳ, ຂໍ້ຕົກລົງ, ລະບຽບການ ທີ່ມີອາຍຸຫຼາຍຈົນເກີນໄປ ຊຶ່ງບໍ່ແທດເໝາະກັບສະພາບການຕົວຈິງ;
- ການຈັດຕັ້ງປະຕິບັດຂອງບັນດາຂະແໜງການກ່ຽວຂ້ອງ ຍັງບໍ່ເປັນເອກະພາບ, ຕ່າງຝ່າຍຕ່າງຄຸ້ມຄອງ ຕາມພາລະບົດບາດ ແລະ ໃຊ້ນິຕິກຳຂອງໃຜລາວ;
- ການດຳເນີນທຸລະກິດບໍ່ເປັນທຳ ເຮັດໃຫ້ວິສາຫະກິດບາງພາກສ່ວນເຮັດແນວບໍ່ຖືກຕ້ອງທີ່ຂັດຕໍ່ດຳລັດ474/ນຍ, ຫຼາຍຂຶ້ນ;
- ການກຳນົດພາລະບາດແຕ່ລະຂະແໜງການ ຍັງບໍ່ມີການກຳນົດເປັນອັນລວມ ເພື່ອເປັນເຄື່ອງມືຮັບໃຊ້ເຂົ້າໃນການຄຸ້ມຄອງ-ຄວບຄຸມລາຄາສິນຄ້າ ແລະ ຄ່າບໍລິການ ຂອງພາກລັດ;

### 3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກຳ

ໃນການແກ້ໄຂບັນຫາທີ່ເກີດຂຶ້ນ ກ່ຽວກັບ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ດ້ວຍທາງເລືອກອື່ນ ຊຶ່ງບໍ່ແມ່ນການອອກນິຕິກຳໃໝ່ນັ້ນ ລັດຖະບານ, ອົງການ ແລະ ຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ເອົາໃຈໃສ່ປະຕິບັດກົດໝາຍ ກໍຄືນິຕິກຳກ່ຽວຂ້ອງທີ່ມີຢູ່ ຢ່າງເຄັ່ງຄັດ ແລະ ເປັນເອກະພາບ; ສຶກສາອົບຮົມໃຫ້ບຸກຄົນ, ນິຕິບຸກຄົນ ໃຫ້ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ ດ້ວຍການໂຄສະນາ, ເຜີຍແຜ່ກົດໝາຍ ໃຫ້ເຂົາເຈົ້າໄດ້ຮັບຮູ້ ແລະ ເຂົ້າໃຈ; ໃຊ້ອຳນາດບໍລິຫານລັດ ໃນການຄຸ້ມຄອງ-ດັດສົມທາງດ້ານໂຄງສ້າງລາຄາ, ການນຳເຂົ້າ, ການຂາຍຍົກ-ການຂາຍຍ່ອຍ, ການບໍລິການ ກໍຄືກັນທັນໃຫ້ຫົວໜ່ວຍທຸລະກິດ ປະຕິບັດຖືກຕ້ອງຕາມກົດໝາຍ; ໃຫ້ຕະຫຼາດດັດສົມເອງ ໂດຍບໍ່ມີການຄຸ້ມຄອງຂອງລັດ ບາງໄລຍະ ແລະ ບາງປະເພດລາຍການສິນຄ້າ ແລະ ການບໍລິການ.

**ຜົນດີ.**

- ສັງຄົມ ໄດ້ຮັບຮູ້ ແລະ ເຂົ້າໃຈກົດໝາຍ, ຂໍ້ຕົກລົງ ແລະ ລະບຽບການຫຼາຍຂຶ້ນ;
- ສາມາດຮູ້ໄດ້ສາເຫດການຂຶ້ນ ຫຼື ຫຼຸດ ລາຄາ-ຄ່າບໍລິການ ຕາມສະພາບກົນໄກຂອງເສດຖະກິດ ເຮັດໃຫ້ລາຄາມີການດັດສົມຕາມຕະຫຼາດ, ລັດມີການຄຸ້ມຄອງ ຫາກປ່ອຍໃຫ້ຫົວໜ່ວຍທຸລະກິດ ມີບົດບາດກຳນົດລາຄາດ້ວຍຕົວມັນເອງທັງໝົດທຸກລາຍການ ອາດກໍ່ໃຫ້ເກີດມີການເອົາປຽບຕໍ່ຜູ້ຊົມໃຊ້.

**ຜົນເສຍ.**

- ຖ້າຫາກບໍ່ມີນິຕິກຳຄຸ້ມຄອງ ຈະເຮັດໃຫ້ອົງການຂອງລັດໃນນາມເປັນຜູ້ຄຸ້ມຄອງ ບໍ່ມີບ່ອນອີງອັນໜັກແໜ້ນໃນການປະຕິບັດໜ້າທີ່ວຽກງານ ຫຼື ການຄຸ້ມຄອງບໍລິຫານລັດ ຊຶ່ງຈະເຮັດໃຫ້ຂາດຄວາມເຊື່ອຖື ຈາກບຸກຄົນ ແລະ ການລົງທຶນທັງພາຍໃນ ແລະ ຕ່າງປະເທດ.
- ຕ້ອງໄດ້ໃຊ້ງົບປະມານ ແລະ ບຸກຄະລາກອນຫຼາຍຂຶ້ນ, ຕ້ອງໄດ້ລົງເຄື່ອນໄຫວວຽກງານຫຼາຍຂຶ້ນ ແລະ ຕໍ່ເນື່ອງ ເຮັດໃຊ້ສິ້ນເປືອງງົບປະມານເພີ່ມຂຶ້ນ;
- ເກີດມີການເລືອກປະຕິບັດ, ບໍ່ມີການດັດສົມຂອງລັດ ຫຼື ໃຊ້ອຳນາດບໍລິຫານລັດເກີນເຫດ;

- ອາດຈະໃຫ້ເກີດມີຊ່ອງຫວ່າງການດໍາເນີນທຸລະກິດທີ່ບໍ່ຖືກຕ້ອງຫຼາຍຂຶ້ນ, ເຮັດໃຫ້ລັດສູນເສຍລາຍຮັບ;
- ການຈັດຕັ້ງປະຕິບັດຂອງເຈົ້າໜ້າທີ່ກ່ຽວຂ້ອງ ມີຄວາມຫຍຸ້ງຍາກໃນການແກ້ໄຂບັນຫາ, ລໍຖ້າແຕ່ຄໍາສັ່ງຈາກຂັ້ນເທິງ, ບໍ່ເປັນເອກະພາບໃນບັນດາຂະແໜງການ;
- ເປັນການເພີ່ມພາລະໃຫ້ອົງການຈັດຕັ້ງລັດ ກໍຄືອົງການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງສິນຄ້າ ແລະ ຄ່າບໍລິການ ທຸກຂະແໜງການ;

**3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກໍາ**

ການຍົກດໍາລັດ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ຂຶ້ນເປັນກົດໝາຍ ເປັນການສັງລວມບັນດາເນື້ອໃນທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ທີ່ຕິດພັນກັບຫຼາຍຂະແໜງການ ເຊັ່ນ ຂະແໜງອຸດສາຫະກໍາ ແລະ ການຄ້າ, ຂະແໜງກະສິກໍາ ແລະ ປ່າໄມ້, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງເຕັກໂນໂລຊີ ແລະ ການສື່ສານ, ຂະແໜງພະລັງງານ-ບໍ່ແຮ່, ຂະແໜງສາທາລະນະສຸກ, ຂະແໜງສຶກສາທິການ ແລະ ກິລາ, ຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຂະແໜງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

**ຜົນດີ.**

- ສາມາດສັງລວມ ແລະ ປັບປຸງບັນດາຂໍ້ກໍານົດ, ລະບຽບການກ່ຽວຂ້ອງ ໃຫ້ມີຄວາມລະອຽດ, ຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ ພ້ອມທັງສອດຄ່ອງສະພາບການພັດທະນາເສດຖະກິດ-ສັງຄົມ, ແນວທາງນະໂຍບາຍຂອງພັກ-ລັດ, ສົນທິສັນຍາ ແລະ ສັນຍາສາກົນ;
- ເປັນນິຕິກໍາ ແລະ ເຄື່ອງມື ໃຫ້ກັບພະນັກງານຄຸ້ມຄອງຂອງລັດ ກໍຄືຂະແໜງການທີ່ກ່ຽວຂ້ອງ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງລາຄາເປັນເອກະພາບ ແລະ ມີປະສິດທິຜົນ ພາຍໃຕ້ການນໍາໃຊ້ກົດໝາຍດຽວກັນ;
- ສະກັດກັ້ນ ແລະ ຕ້ານການລະເມີດກົດໝາຍ ທາງດ້ານລາຄາ, ຕ້ານການເອົາລັດເອົາປຽບຜູ້ຊົມໃຊ້ ບໍ່ໃຫ້ເກີດຂຶ້ນ ຫຼື ໃຫ້ຫຼຸດລົງ;
- ສ້າງຄວາມຍຸຕິທໍາ ໃນການດໍາເນີນທຸລະກິດ ໃຫ້ມີການແຂ່ງຂັນຢ່າງເປັນທໍາ;
- ປະກອບສ່ວນເຂົ້າໃນການສ້າງລາຍໄດ້ ແລະ ເກັບລາຍຮັບເຂົ້າງົບປະມານແຫ່ງລັດ;
- ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໃນມີຄວາມເຂັ້ມແຂງທາງດ້ານເສດຖະກິດ-ສັງຄົມ, ປະເທດຊາດມີຄວາມໝັ້ນຄົງ, ສະຫງົບສຸກ ແລະ ເປັນລະບຽບຮຽບຮ້ອຍ;
- ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.

**ຜົນເສຍ.**

- ລັດຖະບານ ຕ້ອງໃຊ້ງົບປະມານຈໍານວນໜຶ່ງ ເຂົ້າໃນການສ້າງ ແລະ ເຜີຍແຜ່ ກົດໝາຍ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບນີ້;
- ສ້າງຜົນກະທົບຕໍ່ຫົວໜ່ວຍວິສາຫະກິດ, ທຸລະກິດ ທີ່ຍັງບໍ່ຊິນເຄີຍ ຫຼື ບໍ່ຢາກປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ;
- ຖ້າການຄຸ້ມຄອງບໍ່ມີຈຸດສຸມ, ກວ້າງໂພດ, ດົນໂພດ ຈະເຮັດໃຫ້ການຜະລິດ, ການຄ້າຂາຍຫົດຕົວ, ຊັກຊ້າ;
- ຫຼີກລ້ຽງບໍ່ໄດ້ການທັກທ້ວງຈາກສາກົນ.

**3.4 ການເລືອກເອົາວິທີການບໍ່ທັນຍົກລະດັບດໍາລັດວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເປັນກົດໝາຍ**

**3.4.1 ເຫດຜົນ**

ການບໍ່ທັນຍົກລະດັບດໍາລັດ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ໃນໄລຍະນີ້ ເຫັນວ່າດໍາລັດດັ່ງກ່າວໄດ້ມີບັນດານິຕິກໍາຫຼັກໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ບັນຫາສໍາຄັນ ແມ່ນ ໄດ້ມີຄະນະຊີ້ນໍາຄຸ້ມຄອງລາຄາ ສິນຄ້າ-ຄ່າບໍລິການ ຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017 ແລະ ໄດ້ມີການປັບປຸງຂໍ້ຕົກລົງ ເລກທີ 71/ນຍ ມາເປັນ ຂໍ້ຕົກລົງເລກທີ 126/ນຍ, ລົງວັນທີ 8 ທັນວາ 2022 ຊຶ່ງ

ປະຈຸບັນ ໄດ້ມີການແຕ່ງຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນສໍາເລັດແລ້ວ ຊຶ່ງມີຂະແໜງການກ່ຽວຂ້ອງ ເຊັ່ນ ຂະແໜງອຸດສາຫະກໍາ ແລະ ການຄ້າ, ຂະແໜງກະສິກໍາ ແລະ ປ່າໄມ້, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງເຕັກໂນໂລຊີ ແລະ ການສື່ສານ, ຂະແໜງພະລັງງານ-ບໍ່ແຮ່, ຂະແໜງສາທາລະນະສຸກ, ຂະແໜງສຶກສາທິການ ແລະ ກິລາ, ຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຂະແໜງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ; ອັນສໍາຄັນ ຄະນະດັ່ງກ່າວ ກໍຄືທຸກພາກສ່ວນຮ່ວມກັນເປັນເຈົ້າການຈັດຕັ້ງປະຕິບັດຕາມ ພາລະບົດບາດຂອງໃຜມັນ ບົນພື້ນຖານຄວາມເປັນເອກະພາບ, ສືບຕໍ່ເປັນເຈົ້າການໃນການຄຸ້ມຄອງລາຄາສິນຄ້າ-ຄ່າບໍລິການ ໃຫ້ເໝາະສົມໃນແຕ່ລະແຂວງ, ແຕ່ລະໄລຍະ. ນອກນັ້ນ, ຍັງຈະຕ້ອງໄດ້ໃຊ້ງົບປະມານຫຼາຍສົມຄວນ ທີ່ຈະນໍາໃຊ້ເຂົ້າໃນການສ້າງເປັນກົດໝາຍ, ການຈັດພິມປຶ້ມກົດໝາຍ ແລະ ການໂຄສະນາເຜີຍແຜ່ກົດໝາຍ.

### 3.4.2 ການປັບປຸງຮ່າງນິຕິກໍາ

ຖ້າແມ່ນການປັບປຸງຮ່າງນິຕິກໍາ, ໃຫ້ສະໜອງຂໍ້ມູນ ກ່ຽວກັບ ການປະເມີນການຈັດຕັ້ງປະຕິບັດນິຕິກໍາດັ່ງກ່າວໃນໄລຍະຜ່ານມາ.

**ຜົນສໍາເລັດ:**

- ສໍາລັບສິນຄ້າຄວບຄຸມ ລາຄາ ແລະ ຄ່າບໍລິການ ໄດ້ມີການກໍານົດໂຄງປະກອບລາຄາ ດ້ວຍການປະສານສົມທົບກັບຂະແໜງການກ່ຽວຂ້ອງ ເປັນຕົ້ນ ເຂົ້າກິນ, ຊີ້ນໝູ, ປາ ແລະ ນໍ້າມັນເຊື້ອໄຟ ເພື່ອຮັບປະກັນຜົນປະໂຫຍດຂອງລັດ , ຜູ້ຜະລິດ, ຜູ້ດໍາເນີນທຸລະກິດ ແລະ ຜູ້ຊົມໃຊ້ ໄດ້ເປັນຢ່າງດີ;
- ລາຄາສິນຄ້າໃນທ້ອງຕະຫຼາດ ເວົ້າລວມ ມີຄວາມສະຫງົບຂັ້ນພື້ນຖານ ໂດຍສະເພາະໄລຍະເທດສະການ ແລະ ງານບຸນປະເພນີສໍາຄັນຕ່າງໆ, ລາຄາມີການເໜັງຕີງໄປຕາມກົນໄກຕະຫຼາດ ແລະ ຕາມລະດູການ ທີ່ມີການຄຸ້ມຄອງດັດສົມຂອງລັດ;
- ມີການຕິດປ້າຍສະແດງລາຄາສິນຄ້າ ແລະ ຄ່າບໍລິການ ເພື່ອເປັນການສະໜອງຂໍ້ມູນພື້ນຖານໃຫ້ແກ່ຜູ້ຊົມໃຊ້ ມີທາງເລືອກ ເພື່ອຫຼຸດຜ່ອນການເອົາລັດເອົາປຽບ;
- ເປັນການດັດສົມການຄຸ້ມຄອງ, ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ເຂົ້າສູ່ລະບົບເທື່ອລະກ້າວ;
- ປະກອບສ່ວນເຮັດໃຫ້ສັງຄົມ ມີຄວາມສະຫງົບ, ຮັກສາສະຖຽນລະພາບທາງດ້ານລາຄາ ໃຫ້ຢູ່ໃນລະດັບທີ່ສົມເຫດສົມຜົນ ແລະ ສ້າງລາຍຮັບເຂົ້າງົບປະມານຂອງລັດ ໄດ້ເປັນລະບົບ;

**ຂໍ້ຄົງຄ້າງ:**

- ການຈັດຕັ້ງປະຕິບັດຂອງຂະແໜງການກ່ຽວຂ້ອງ ຍັງບໍ່ທັນເປັນເຈົ້າການຮ່ວມກັນ ເນື່ອງຈາກເນື້ອໃນຂອງດໍາລັດຍັງບໍ່ໄດ້ກໍານົດພາລະບົດບາດ, ສິດ ແລະ ໜ້າທີ່ລະອຽດ ຂອງຂະແໜງການອື່ນ ນອກຈາກຂະແໜງອຸດສາຫະກໍາ ແລະ ການຄ້າ;
- ມາດຕະການຄວບຄຸມລາຄາ ສິນຄ້າ ແລະ ຄ່າບໍລິການ ຍັງບໍ່ທັນພຽງພໍ, ຮັດກຸມ ແລະ ສອດຄ່ອງກັບລະບຽບການຂອງຂະແໜງການກ່ຽວຂ້ອງ;
- ຍັງມີບາງຂະແໜງ ຍັງບໍ່ສາມາດແຕ່ງຕັ້ງອົງການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ແລະ ກໍານົດລາຍການສິນຄ້າ ແລະ ການບໍລິການຄວບຄຸມ ເຊັ່ນ: ຂະແໜງສາທາລະນະສຸກ, ຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຊຶ່ງສົ່ງຜົນໃຫ້ລາຍການສິນຄ້າ ແລະ ຄ່າບໍລິການ ຂອງຂະແໜງເຫຼົ່ານັ້ນ ບໍ່ມີການຄຸ້ມຄອງ ອາດເກີດເປັນຊ່ອງວ່າງໃ ຫ້ທຸລະກິດມີການເຄື່ອໄຫວແບບບໍ່ຖືກຕ້ອງ;
- ການເຜີຍແຜ່ ແລະ ຈັດຕັ້ງປະຕິບັດດໍາລັດ 474/ນຍ ລະຫວ່າງຂະແໜງການກ່ຽວຂ້ອງ ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ, ສ່ວນຫຼາຍສັງຄົມຍັງເຂົ້າໃຈວ່າ ວຽກງານຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ແມ່ນ ພາລະບົດບາດ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ;

- ການປະສານງານ ກັບບັນດາຂະແໜງການກ່ຽວຂ້ອງ ໃນວຽກງານນີ້ຍັງເຮັດບໍ່ທັນໄດ້ດີ, ບາງຂະແໜງການຍັງຂາດຄວາມຮັບຜິດຊອບ ແລະ ບໍ່ໃຫ້ການຮ່ວມມືເທົ່າທີ່ຄວນ ລວມທັງຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຂອງບັນດາຂະແໜງການກ່ຽວຂ້ອງ ຕໍ່ກັບວຽກງານຄຸ້ມຄອງລາຄາ ກໍຍັງບໍ່ສູງເທົ່າທີ່ຄວນ;
- ການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ໃນໄລຍະຜ່ານມາ ຍັງນຳໃຊ້ແຕ່ມາດຕະການບໍລິຫານ, ແຕ່ຍັງຂາດມາດຕະການທາງເສດຖະກິດເປັນຕົ້ນ ຄັງສິນຄ້າ ຫຼື ກອງທຶນ...(ນອກຈາກເຂົ້າກິນ);
- ງົບປະມານຮັບໃຊ້ວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ລາຄາ ສິນຄ້າ ແລະ ຄ່າບໍລິການ ຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການ ເພື່ອຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ.

**3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ**

ນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ຈະຈຳກັດການແຂ່ງຂັນທາງທຸລະກິດ ໃນ ສປປ ລາວ ຫຼື ບໍ່?

☐ ຈຳກັດ ☑ ບໍ່ຈຳກັດ

**3.4.4 ພັນທະຕໍ່ສາກົນ**

ຮ່າງນິຕິກຳ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼື ບໍ່? ☑ ແມ່ນ ☐ ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☑ WTO ☑AEC ☑ FTA ☐ ອື່ນໆ (ກຳນົດແຈ້ງ)

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງມີຄວາມສອດຄ່ອງກັບພັນທະສາກົນນັ້ນ ຫຼື ບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

**3.4.5 ນິຕິກຳ ທີ່ພົວພັນການສ້າງນິຕິກຳ**

ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼື ບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

**4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ**

**4.1 ເສດຖະກິດ ແລະ ສັງຄົມ**

**4.1.1 ຜົນກະທົບ**

ດຳລັດ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ມີຈຸດປະສົງ ເພື່ອກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງລາຄາ ແນໃສ່ການຮັກສາສະຖຽນລະພາບດ້ານລາຄາ, ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ຜົນປະໂຫຍດລວມຂອງລັດ;

**ຜົນກະທົບທາງບວກ**

- ຮັບປະກັນໃນການຄຸ້ມຄອງລາຄາ ຢູ່ ສປປ ລາວ ຖືກກຳນົດດ້ວຍກົນໄກຕະຫຼາດ ທີ່ມີການຄຸ້ມຄອງດັດສົມຂອງລັດ, ໃຫ້ໄປຕາມສະພາບຂອງການພັດທະນາ ເສດຖະກິດ-ສັງຄົມ, ຕາມກົດໝາຍ ແລະ ລະບຽບການ ທີ່ວາງໄວ້;
- ສາມາດແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ ກ່ຽວຂ້ອງກັບການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ (ການສວຍໂອກາດເອົາລັດເອົາປຽບ ທາງດ້ານລາຄາ, ຄຸນນະພາບ ສິນຄ້າ ແລະ ການບໍລິການ) ໃຫ້ຫຼຸດລົງ ແລະ ແກ້ໄຂໄດ້ຢ່າງຂາດຕົວ;
- ສ້າງຄວາມຍຸຕິທຳໃນການດຳເນີນທຸລະກິດ, ຫົວໜ່ວຍທຸລະກິດມີຄວາມເຂັ້ມແຂງ ສາມາດແຂ່ງຂັນໃນສະພາບການເຊື່ອມໂຍງພາກພື້ນ ແລະ ສາກົນ;
- ສ້າງຄວາມເຊື່ອໝັ້ນໃຫ້ການລົງທຶນ ພາຍໃນ ແລະ ຕ່າງປະເທດ, ໂດຍນຳໃຊ້ມາດຕະການໃນການຄຸ້ມຄອງລາຄາຕາມຄວາມຈຳເປັນ ບົນພື້ນຖານຫຼັກການ ການບໍ່ຈຳແນກປະຕິບັດ ແລະ ຄວາມໂປ່ງໃສ;
- ປະເທດມີຄວາມໝັ້ນຄົງ ແລະ ສະຖຽນລະພາບ ທາງດ້ານເສດຖະກິດ, ການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

**ຜົນກະທົບທາງລົບ**

- ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ຕ້ອງໄດ້ປະຕິບັດ ແລະ ປັບຕົວ ໃຫ້ເຂົ້າກັບເງື່ອນໄຂຂອງກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
- ໃນບາງໄລຍະທີ່ນໍາໃຊ້ມາດຕະການຄວບຄຸມແກ່ຍາວເກີນໄປ ຈະສົ່ງຜົນກະທົບຕໍ່ການຜະລິດ ແລະ ການດໍາເນີນທຸລະກິດ ຫົດຕົວ;

**4.1.2 ເງື່ອນໄຂໃນການປະຕິບັດນິຕິກໍາ**

**ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດດໍາລັດ:**

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):

ຄ່າໃຊ້ຈ່າຍ ໃນແຕ່ລະປີ:

**4.1.3 ການທາບທາມຄໍາເຫັນ**

**4.1.4 ສະຫຼຸບ**

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈໍານວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☐ | ☐ | ☐ |
| ຈໍານວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☐ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☐ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດໍາລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດໍາລົງຊີວິດຂອງບຸກຄົນ)* | ☐ | ☐ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☐ | ☐ | ☐ |

**4.2 ພາກທຸລະກິດ**

**4.2.1 ຜົນກະທົບ**

ດໍາລັດສະບັບນີ້ ຈະກະທົບສໍາລັບພາກທຸລະກິດທຸກຂະແໜງການ ທີ່ຕິດພັນກັບການຄຸ້ມຄອງລາຄາ ສິນຄ້າ ແລະ ການບໍລິການ.

**ຜົນກະທົບທາງບວກ**

ດໍາລັດສະບັບນີ້ ເປັນບ່ອນອີງໃຫ້ແກ່ຫົວໜ່ວຍທຸລະກິດ ໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຂົາເຈົ້າ, ສ້າງຄວາມຍຸຕິທໍາໃນການດໍາເນີນທຸລະກິດ ແລະ ຜູ້ບໍລິໂພກ.

**ຜົນກະທົບທາງລົບ**

ຫົວໜ່ວຍທຸລະກິດຈໍານວນໜຶ່ງ ຈະໄດ້ຮັບຜົນກະທົບຈາກດໍາລັດສະບັບນີ້ ເນື່ອງຈາກຕ້ອງໄດ້ປັບປຸງຕົນເອງ ໃຫ້ໄດ້ຕາມເງື່ອນໄຂທີ່ວາງອອກຂອງດໍາລັດ, ຖ້າບໍ່ສາມາດປະຕິບັດໄດ້ ຫຼື ບໍ່ສາມາດແຂ່ງຂັນໄດ້ ໃນການດໍາເນີນທຸລະກິດ ກໍຈະໄດ້ຍຸບເລີກ;

ຫົວໜ່ວຍທຸລະກິດສ່ວນຫຼາຍ ຈະບໍ່ໃຫ້ການຮ່ວມມືຈັດຕັ້ງປະຕິບັດ ໃນໄລຍະເລີ່ມຕົ້ນ.

#### 4.2.2 ເງື່ອນໄຂໃນການປະຕິບັດດຳລັດ

ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດດຳລັດ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):

ຄ່າໃຊ້ຈ່າຍ ໃນແຕ່ລະປີ:

#### 4.2.3 ການທາບທາມຄຳເຫັນ

ຮ່າງດຳລັດສະບັບນີ້ ໄດ້ທາບທາມຄຳເຫັນຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ລວມທັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ບັນດາຫົວໜ່ວຍທຸລະກິດ, ຊາວຄ້າຂາຍ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ (ຕິດພັນກັບການລົງທ້ອງຖິ່ນ, ຈັດກອງປະຊຸມສຳມະນາວິຊາການ ຢູ່ບັນດາແຂວງ ໃນໄລຍະຜ່ານມາ).

ການທາບທາມ ແມ່ນ ໄດ້ຮັບການປະກອບຄຳເຫັນຢ່າງຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບ ເພື່ອສະຫຼຸບສັງລວມການຈັດຕັ້ງປະຕິບັດດຳລັດ 474/ນຍ ໃນແຕ່ລະໄລຍະ ຢ່າງເໝາະສົມ.

#### 4.2.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບ ຜົນກະທົບ)* | ☐ | ☐ | ☐ |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ)* | ☐ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | ☐ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ)* | ☐ | ☐ | ☐ |
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☐ | ☐ | ☐ |

### 4.3 ລັດຖະບານ

#### 4.3.1 ຜົນກະທົບ

ພາຍຫຼັງດຳລັດສະບັບນີ້ ຍົກຂຶ້ນເປັນກົດໝາຍ ແມ່ນ ຍັງເປັນເຄື່ອງມືທີ່ສຳຄັນໃຫ້ແກ່ລັດຖະບານ ໃນການປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ລັດ, ສ້າງໃຫ້ຫົວໜ່ວຍທຸລະກິດ ປັບຕົວເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປ້ອງສິດຜົນປະໂຫຍດຂອງລັດ, ຜູ້ຜະລິດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້, ຊ່ວຍຊຸກຍູ້ໃຫ້ການສ້າງ ແລະ ເກັບລາຍຮັບເຂົ້າງົບປະມານໄດ້ຢ່າງມີປະສິດທິຜົນ ແລະ ໝັ້ນຄົງ. ເພື່ອໃຫ້ໄດ້ເງື່ອນໄຂດັ່ງກ່າວມາຂ້າງເທິງ ລັດຖະບານຕ້ອງໄດ້ໃຊ້ງົບປະມານຈຳນວນໜຶ່ງ ເຂົ້າໃນການສ້າງກົດໝາຍ, ການຈັດພິມປຶ້ມກົດໝາຍ ແລະ ການໂຄສະນາເຜີຍແຜ່ກົດໝາຍ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະບັນດາຂະແໜງການກ່ຽວຂ້ອງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ, ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ, ລວມທັງບັນດາຫົວໜ່ວຍວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດທີ່ລົງທຶນ ຢູ່ ສປປ ລາວ, ໄດ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບ ກົດໝາຍ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ສະບັບນີ້.

**ຜົນກະທົບທາງບວກ**

- ການຄຸ້ມຄອງຂອງລັດ ສະດວກ ແລະ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດພາຍໃຕ້ກົດໝາຍວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບນີ້;
- ເປັນບ່ອນອີງ ແລະ ເຄື່ອງມື ໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ, ຄຸ້ມຄອງ, ຕ້ານ ແລະ ສະກັດກັ້ນບັນດາການກະທຳຜິດທີ່ອາດຈະເກີດຂຶ້ນ ກ່ຽວຂ້ອງກັບ ການສວຍໂອກາດຂຶ້ນລາຄາ, ຂາຍລາຄາເກີນຈິງ, ເອົາລັດເອົາປຽບຜູ້ຊົມໃຊ້, ກັກຕຸນສິນຄ້າ...;
- ຮັກສາໄດ້ສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ຊົມໃຊ້ກໍຄືປະຊາຊົນ ແລະ ຜູ້ດຳເນີນທຸລະກິດ;
- ສ້າງ ແລະ ເກັບລາຍຮັບ ເຂົ້າງົບປະມານເພີ່ມຂຶ້ນ ແລະ ຢ່າງໝັ້ນຄົງ.

**ຜົນກະທົບທາງລົບ**

- ບໍ່ມີ

**4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ**

ເຖິງແມ່ນວ່າດຳລັດ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ໃນການຍົກຂຶ້ນເປັນກົດໝາຍສະບັບນີ້ ບໍ່ໄດ້ກຳນົດໂດຍກົງໃຫ້ລັດຖະບານຕ້ອງນຳໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແຕ່ເພື່ອສ້າງເງື່ອນໄຂໃຫ້ແກ່ການຄຸ້ມລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ແລະ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການສະບັບນີ້ ໃຫ້ໄດ້ຮັບຜົນດີນັ້ນ ລັດຖະບານຄວນມີງົບປະມານເຂົ້າໃນການຈັດກອງປະຊຸມການຈັດຕັ້ງປະຕິບັດ ແລະ ກອງປະຊຸມເຜີຍແຜ່ການນຳໃຊ້ກົດໝາຍສະບັບນີ້ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໄດ້ຮັບຮູ້ ແລະ ເຂົ້າໃຈເປັນເອກະພາບກັນ ຈຶ່ງຈະເຮັດໃຫ້ກົດໝາຍຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):**

- ບໍ່ມີ

**ຄ່າໃຊ້ຈ່າຍ ຕໍ່ປີ:**

- ບໍ່ມີ

**4.3.3 ການທາບທາມຄຳເຫັນ**

**4.3.4 ສະຫຼຸບ**

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☐ | ☐ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ)* | ☐ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ)* | ☐ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ)* | ☐ | ☐ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☐ | ☐ | ☐ |

## ການຈັດຕັ້ງປະຕິບັດ

**5.1 ການສະໜັບສະໜູນ ແກ່ບຸກຄົນ**

ບໍ່ມີ.

**5.2 ການສະໜັບສະໜູນແກ່ພາກທຸລະກິດ**

ບໍ່ມີ.

**5.3 ແຜນການຈັດຕັ້ງປະຕິບັດ**

ພາຍຫຼັງດຳລັດ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ, ໄດ້ຖືກຮັບຮອງເປັນກົດໝາຍແລ້ວ ແລະ ປະການນຳໃຊ້ແລ້ວ, ພາກສ່ວນທີ່ມີໜ້າທີ່ໃນຄະນະຊີ້ນຳ ວຽກຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ເປັນເຈົ້າການ ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍສະບັບນີ້ ໃຫ້ມີລັກສະນະຢ່າງກວ້າງຂວາງ ແລະ ຫຼາຍຮູບແບບຫລາຍຊ່ອງທາງ ໂດຍສະເພາະ ບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ, ຫົວໜ່ວຍທຸລະກິດ, ຜູ້ຊົມໃຊ້ກໍຄືປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ, ພ້ອມນັ້ນ ຕ້ອງໄດ້ຈັດຝຶກອົບຮົມ, ຈັດກອງປະຊຸມຮ່ວມກະຊວງ, ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈມີຄວາມເປັນເອກະພາບ ໃນການນຳໃຊ້ກົດໝາຍສະບັບນີ້ ເພື່ອເຮັດກົດໝາຍ ຫຼື ນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ ແລະ ສອດຄ່ອງ ທາງດ້ານຫຼັກການ-ລະບຽບການ ທີ່ກຳນົດໄວ້ໃນກົດໝາຍ ໂດຍສະເພາະ ການຕິດຕາມກວດກາ, ຄຸ້ມຄອງ ແລະ ການນຳໃຊ້ມາດຕະການຕ່າງໆ ຢ່າມີປະສິດທິພາບ ແລະ ປະສິດທິຜົນ.

ໃນທຸກໜຶ່ງປີ ຂະແໜງອຸດສາຫະກຳ ແລະ ການຄ້າ ໄດ້ມີປະສານສົມທົບກັບຂະແໜງ ການກ່ຽວຂ້ອງ ໂດຍສະເພາະແມ່ນ ອົງການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ຂັ້ນສູນກາງ ແລະ ທ້ອງຖິ່ນຂອງລັດ ທົບທວນຄືນກ່ຽວກັບ ຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ເພື່ອຈະໄດ້ເປັນຂໍ້ມູນໃນການປັບປຸງ ກົດໝາຍສະບັບນີ້ ກໍຄືການແກ້ໄຂວຽກງານການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ໃນແຕ່ລະໄລຍະ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ຂອງປະເທດຊາດ.

**5.4 ງົບປະມານ ແລະ ແຫຼ່ງທຶນ**

ຢ່າງໃດກໍຕາມ ການຍົກດຳລັດ ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ຂຶ້ນເປັນກົດໝາຍໃນຄັ້ງນີ້ ຖືໄດ້ວ່າຍັງຂາດງົບປະມານ ແລະ ແຫຼ່ງທຶນ ທີ່ນຳມາໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້ ແລະ ແຕ່ສູນກາງລົງຮອດທ້ອງຖິ່ນ ກໍໄດ້ມີການແຕ່ງຕັ້ງອົງການຄຸ້ມຄອງລາຄາຂຶ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານດັ່ງກ່າວ ໄດ້ມີປະສິດທິພາບ ແລະ ປະສິດທິຜົນ ເປັນກ້າວໆ ຕາມທີ່ກຳນົດໄວ້ໃນກົດໝາຍ.

**5.5 ທົບທວນຄືນ**

**ການອະນຸມັດ**

1. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ ຫຼື

2. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ມີຄຳເຫັນຕໍ່ບົດປະເມີນຜົນ

ນະຄອນຫຼວງວຽງຈັນ, ວັນທີ ............ພຶດສະພາ 2023

**ຫົວໜ້າຄະນະຮັບຜິດຊອບ**